# TOR: Nursery landscape decoration and Maintenance Y2026 - 2028



Nursery landscape decoration and maintenance, and Support Rehabilitation and Reforestation Works Year 2026-2028.

Rehabilitation and Reforestation Section

6/20/2025

## Contents

ງານຈ້າງເໝົາບໍລິການ  ຈັດຕົບແຕ່ງ, ບຳລຸງຮັກສາ ຈັດສວນ ແລະ ສະໜັບສະໜູນໜ່ວຍງານຟື້ນຟູເໜືອງ ແລະ ປູກປ່າທົດແທນຂອງບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເມືອງຫົງສາ ແຂວງໄຊຍະບູລີ ສປປ ລາວ ..... 2

TOR: Nursery landscape decoration, maintenance and support Rehabilitation and Reforestation work ..... 2

1. ຄວາມເປັນມາ ..... 2
2. ວັດຖຸປະສົງ ..... 2
3. ຄຸນສົມບັດຜູ້ສະເໜີລາຄາ ..... 2
4. ລາຍລະອຽດ ແລະ ຂອບເຂດຂອງວຽກງານ ..... 2
5. ເກນການພິຈາລະນາຄັດເລືອກ ..... 4
6. ການສະເໜີລາຄາ ..... 5
7. ໄລຍະເວລາການຈ້າງ ..... 6
8. ການຈ່າຍຄ່າຈ້າງ ..... 6
9. ຫຼັກປະກັນ ..... 6
10. ໜ້າທີ່ ແລະ ຄວມຮັບຜິດຊອບຂອງຜູ້ຮັບຈ້າງ ..... 6
11. ບົດປັບໄໝ ..... 8
12. ການຍົກເລີກສັນຍາ ..... 8
13. ອື່ນໆ ..... 9

ເອກະສານຊ້ອນທ້າຍ A (Appendix A) ..... 10

ເອກະສານຊ້ອນທ້າຍ B (Appendix B) ..... 11

ເອກະສານຊ້ອນທ້າຍ C (Appendix C) ..... 12

# ງານຈ້າງເໝົາບໍລິການ ຈັດຕົບແຕ່ງ, ບຳລຸງຮັກສາ ຈັດສວນ ແລະ ສະໜັບສະໜູນໜ່ວຍງານຟື້ນຟູເໜືອງ ແລະ ປູກປ່າທົດແທນຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເມືອງຫົງສາ ແຂວງໄຊຍະບູລີ ສປປ ລາວ

## TOR: Nursery landscape decoration, maintenance and support Rehabilitation and Reforestation work

## 1. ຄວາມເປັນມາ

ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຖືກສ້າງຕັ້ງຂຶ້ນໃນປີ 2009 ໂດຍ ບໍລິສັດ ບ້ານປູ ພາເວີ ຈຳກັດ (BPP), ບໍລິສັດ ຜະລິດໄຟຟ້າ ລາດຊະບູລີ ໂຮນດິ້ງຈຳກັດ (RATCH), ແລະ ລັດວິສາຫະກິດຖືຮຸ້ນລາວ (LHSE) ພັດທະນາ ແລະ ດຳເນີນງານການກໍ່ສ້າງໂຮງໄຟຟ້າປາກບໍ່ແຮ່ຖ່ານຫີນ ທີ່ມີກຳລັງການຜະລິດກະແສໄຟຟ້າໄດ້ 1.878 MW ໂດຍທົ່ວໄປເອີ້ນວ່າ 'ໂຮງໄຟຟ້າພະລັງງານຄວາມຮ້ອນຫົງສາ. ໂຮງໄຟຟ້າພະລັງງານຄວາມຮ້ອນຫົງສາ ເປັນໂຮງໄຟຟ້າທີ່ມີກຳລັງການຜະລິດກະແສໄຟຟ້າໄດ້ສູງສຸດຂອງ ສປປ ລາວ ເພື່ອສະໜອງພະລັງງານໄຟຟ້າໃຫ້ແກ່ສອງປະເທດ ໄດ້ແກ່ລາວ ແລະ ໄທ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຕັ້ງຢູ່ທີ່ ເມືອງຫົງສາ ແຂວງໄຊຍະບູລີ ສປປ ລາວ

## 2. ວັດຖຸປະສົງ

ບໍລິສັດໄຟຟ້າ ຫົງສາ ຈຳກັດ ມີຈຸດປະສົງທີ່ຈະຈັດຈ້າງ ຜູ້ຮັບຈ້າງ ເພື່ອດູແລຮັກສາພູມີທັດ ພາຍໃນພື້ນທີ່ສວນກ້າເບ້ຍໄມ້ ແລະ ສະໜັບສະໜູນງານຟື້ນຟູສະພາບເໜືອງ ແລະ ປູກປ່າທົດແທນ ຂອງບໍລິສັດ ໄຟຟ້າຫົງສາ ຈຳກັດ

## 3. ຄຸນສົມບັດຜູ້ສະເໜີລາຄາ

3.1. ຜູ້ສະເໜີລາຄາຕ້ອງເປັນນິຕິບຸກຄົນຜູ້ທີ່ມີວັດຖຸປະສົງໃນການໃຫ້ບໍລິການວຽກງານ ຕົບແຕ່ງ ແລະ ບຳລຸງຮັກສາ ງານຈັດສວນ ອີງຕາມໃບທະບຽນວິສາຫະກິດ ຕາມກົດໝາຍ ສປປ ລາວ

3.2. ຜູ້ສະເໜີລາຄາຕ້ອງມີປະສົບການໃນການໃຫ້ບໍລິການວຽກງານຕົບແຕ່ງ, ບຳລຸງຮັກສາ ງານຈັດສວນ ແລະ ການກະກຽມເບ້ຍໄມ້

3.3. ຜູ້ສະເໜີລາຄາຕ້ອງບໍ່ເປັນຜູ້ມີຜົນປະໂຫຍດຮ່ວມກັນກັບຜູ້ສະເໜີລາຄາລາຍອື່ນ ຫຼື ບໍ່ເປັນຜູ້ກະທຳການອັນເປັນການຂັດຂວາງການປະມູນໃນຄັ້ງນີ້

3.4. ຜູ້ສະເໜີລາຄາຕ້ອງບໍ່ແມ່ນພະນັກງານ ຫຼື ມີຄວາມສຳພັນຕາມກົດໝາຍກັບ ຄະນະກຳມະການຈັດຊື້ ຈັດຈ້າງ ຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ

3.5. ຜູ້ສະເໜີລາຄາຕ້ອງບໍ່ເປັນຜູ້ທີ່ເຮັດຜິດສັນຍາຈ້າງກັບ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເຊັ່ນ: ເຄີຍອອກໜັງສືເຕືອນໃນການເຮັດຜິດສັນຍາຢ່າງໃດຢ່າງໜຶ່ງ

3.6. ຜູ້ສະເໜີລາຄາຕ້ອງມີເງິນໝຸນວຽນໃນທະນາຄານບໍ່ນ້ອຍກວ່າ 50,000,000 ກີບ (ຫ້າສິບລ້ານກີບ) ຫຼື 100,000-ບາດ (ຫນຶ່ງແສນບາດຖ້ວນ) ມີໄລຍະເວລາບໍ່ນ້ອຍກວ່າ 1 ປີ ແລະ ຕ້ອງເປັນບັນຊີຂອງຜູ້ສະເໜີລາຄາເທົ່ານັ້ນ

## 4. ລາຍລະອຽດ ແລະ ຂອບເຂດຂອງວຽກງານ

4.1. ຜູ້ຮັບຈ້າງຕ້ອງດຳເນີນວຽກງານ ຈັດ ຕົບແຕ່ງ, ບຳລຸງຮັກສາ ວຽກງານຈັດສວນ ພາຍໃນພື້ນທີ່ ສວນກ້າເບ້ຍໄມ້ ຂອງບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີຈຳນວນພື້ນທີ່ທັງໝົດ 68,448 ຕາລາງແມັດ

4.2. ສະໜັບສະໜູນວຽກງານກະກຽມເບ້ຍໄມ້ ເພື່ອໃຊ້ໃນການຟື້ນຟູເໜືອງ ແລະ ຟື້ນຟູປ່າ

4.3. ລາຍລະອຽດ ແລະ ລັກສະນະຂອງງານ

4.3.1. ງານຕັດຫຍ້າທັງໝົດໃນຂອບເຂດສວນກ້າ ແລະ ອະນາໄມທີ່ອບໍລິເວນພື້ນທີ່ຕັດຫຍ້າ

4.3.2. ງານເບິ່ງແຍງ ຕົ້ນໄມ້, ຣົດນ້ຳ, ໃສ່ຝຸ່ນ ປຸ໋ຍ ຄູນດິນ ແລະ ປູກຊ້ອມແຊມບ່ອນທີ່ຕົ້ນໄມ້ຕາຍ

4.3.3. ງານກຳຈັດແມງໄມ້ ຫຍ້າ ສັດຕູພືດ

4.3.4. ງານປູກທົດແທນຕົ້ນຫຍ້າ ແລະ ຕົ້ນໄມ້ທີ່ຕາຍໃຫ້ຄືງສະພາບເດີມ

4.3.5. ງານຕົບແຕ່ງກິ່ງໄມ້ ຕົ້ນໄມ້ ທີ່ບໍ່ເປັນລະບຽບ ຫຼື ມີສະພາບທີ່ບໍ່ປອດໄພ

4.3.6. ວຽກງານອະນາໄມ ຮາງລະບາຍນ້ຳ

4.3.7. ວຽກງານເພາະປູກ ເບິ່ງແຍງ ເບ້ຍໄມ້ສຳລັບປູກທົດແທນ / ຊ່ອມແຊມ

4.3.8. ງານບຳລຸງຮັກສາໄມ້ໃນກະຖາງທັງໝົດ

4.3.9. ສະໜັບສະໜູນງານກະກຽມເບ້ຍໄມ້ ເພື່ອໃຊ້ໃນງານຟື້ນຟູເໜືອງ ແລະ ຟື້ນຟູປ່າ ຕາມແຜນງານທີ່ທາງບໍລິສັດໄດ້ກຳນົດໄວ້

4.3.10. ງານເກັບເມັດພັນ, ຫວ່ານເມັດພັນ, ເອົາຕົ້ນອ່ອນລົງຖົງເພາະຊຳ, ບຳລຸງຮັກສາໜານເພາະຊຳ, ອານະໄມ້, ເສຍຫຍ້າ, ຕັດຮາກ, ໃສ່ປູຍ, ຈັດລະດັບ ລວມໄປເຖິງການກຳຈັດສັດຕູພືດໃນທີ່ອບໍລິເວນສວນກ້າ

4.3.11. ງານຜະລິດປຸຍໝັກ ແລະ ນ້ຳສະກັດຊີວະພາບສູດຕ່າງໆ ເພື່ອເລັ່ງການຈະເລີນເຕີບໂຕຂອງເບ້ຍໄມ້ ແລະ ກຳຈັດສັດຕູພືດ

4.3.12. ສະໜັບສະໜູນງານຕ່າງໆ ຂອງສວນກ້າເບ້ຍໄມ້ເຊັ່ນ: ງານປູກຊ່ອມແຊມພື້ນທີ່ຟື້ນຟູເໜືອງ, ງານວັນປູກຕົ້ນໄມ້ປະຈຳປີຂອງບໍລິສັດ ແລະ ງານອື່ນໆທີ່ທາງສວນກ້າເບ້ຍໄມ້ໄດ້ຈັດຂຶ້ນ.

4.3.13. ຜູ້ຮັບຈ້າງຕ້ອງສະເໜີແຜນງານ ໃນການເຮັດວຽກງານ ໃຫ້ຜູ້ວ່າຈ້າງພິຈາລະນາ ເພື່ອດຳເນີນການອະນຸມັດກ່ອນເລີ່ມວຽກງານ

4.3.14. ໃນກໍລະນີຜູ້ຮັບຈ້າງທຳງານບໍ່ມີປະສິດທິພາບ ຫຼື ຜົນງານບໍ່ເປັນທີ່ເພິງພໍໃຈ ຜູ້ວ່າຈ້າງມີສິດຮຽກຮ້ອງໃຫ້ຜູ້ຮັບຈ້າງດຳເນີນການແກ້ໄຂວຽກງານດັ່ງກ່າວຈົນເປັນທີ່ພໍໃຈ

4.4. ຜູ້ຮັບຈ້າງຕ້ອງຈັດຫາພະນັກງານ ເພື່ອມາດຳເນີນວຽກງານຕາມ ຂໍ້ 4 ທີ່ມີຄຸນສົມບັດດັ່ງຕໍ່ໄປນີ້

4.4.1. ຫົວໜ້າງານ ຈຳນວນ 1 ຄົນ

4.4.2. ງານຕົບແຕ່ງ ບຳລຸງຮັກສາ ຈັດສວນ ຈຳນວນ 4 ຄົນ ປະກອບດ້ວຍ ຊາຍ 1 ຄົນ ຍິງ 3 ຄົນ

4.4.3. ງານສະໜັບສະໜູນງານຟື້ນຟູເໜືອງ ແລະ ປູກປ່າທົດແທນ ຈຳນວນ 6 ຄົນ ປະກອບດ້ວຍ ຊາຍ 2 ຄົນ ຍິງ 4 ຄົນ

4.4.4. ອາຍຸ 18-60 ປີ

4.4.5. ສັນຊາດລາວ

4.4.6. ບໍ່ຈຳກັດວຸດທິການສຶກສາ

4.4.7. ບໍ່ຕິດສານເສບຕິດ ຫຼື ຕິດທາດເຫຼົ້າຊຳເຮື້ອ

4.4.8. ບໍ່ເປັນຄົນທີ່ບໍ່ມີຄວາມສາມາດ, ສະຕິບໍ່ດີ ຫຼື ມີຮ່າງກາຍບໍ່ພ້ອມ ຫຼື ຈິດບໍ່ເໝາະສົມທີ່ຈະປະຕິບັດໜ້າທີ່ໄດ້.

4.4.9. ບໍ່ເຄີຍຕິດຄຸກ ຫຼື ຄະດີຮ້າຍແຮງ.

4.4.10. ສຸຂະພາບດີ, ແຂງແຮງ ບໍ່ມີພະຍາດປະຈຳຕົວ ບໍ່ເປັນພະຍາດຕິດຕໍ່ທີ່ຮ້າຍແຮງ ຫຼື ຢູ່ໃນໄລຍະທີ່ອາການປະກົດເປັນທີ່ໜ້າລັງກຽດແກ່ສັງຄົມ ຫຼື ເປັນພະຍາດທີ່ມີຜົນກະທົບຕໍ່ການປະຕິບັດໜ້າທີ່.

4.4.11. ບໍ່ຕິດການພະນັນ

4.5. ຜູ້ຮັບຈ້າງຕ້ອງ ຮັບຜິດຊອບຈັດຫາ ວັດສະດຸ ອຸປະກອນ ແລະ ເຄື່ອງມືແລະປຸ໋ຍເຄມີຕ່າງໆດັ່ງຕໍ່ໄປນີ້

4.5.1. ເຄື່ອງຕັດຫຍ້າແບບສາຍສະພາຍ ຈຳນວນ 2 ເຄື່ອງ ( ລວມໃບມີດ ແລະ ນ້ຳມັນແອັດຊັງ )

4.5.2. ເຄື່ອງຕັດແຕ່ງໄມ້ປະດັບຕ່າງໆ ຊະນິດເຄື່ອງຍົນຈຳນວນ 1 ເຄື່ອງ (ລວມນ້ຳມັນແອັດຊັງ)

4.5.3. ມີດ,ຈົກ,ຊ້ວນ,ສຽມ ແລະ ເຄື່ອງມືຈຳເປັນອື່ນໆໃຫ້ພຽງພໍ

4.5.4. ສ່ວນວັດສະດຸ ອຸປະກອນ ແລະ ເຄື່ອງມືອື່ນທີ່ຈຳເປັນ ຕໍ່ການເຮັດວຽກງານ ນອກເໜືອຈາກລາຍການຂ້າງເທິງ ແມ່ນໃຫ້ຜູ້ຮັບຈ້າງເປັນຜູ້ຮັບຜິດຊອບ ຈັດຫາເອງ

4.5.5. ຜູ້ຮັບຈ້າງຈະຕ້ອງຈັດຫາຊຸດຢູນິຟອມ ຫຼື ເຄື່ອງແບບຂອງບໍລິສັດແລະອຸປະກອນປ້ອງກັນໄພສ່ວນບຸກຄົນ ( PPE ) ໃຫ້ກັບພະນັກງານທຸກຄົນໃຫ້ຄົບຕາມກົດຂໍ້ບັງຄັບຂອງບໍລິສັດ ໄຟຟ້າຫົງສາ ຈຳກັດ ເຊັ່ນ ເກີບເຊບຕີ້ຫຼືເກີບໂບກຫົວເຫຼັກ,ໝວກນິລະໄພ,ເສື້ອສະທ້ອນແສງແລະອຸປະກອນປ້ອງກັນອື່ນໆນອກເໜືອຈາກທີ່ກ່າວມາເບື້ອງຕົ້ນ ແລະ ຕ້ອງປະຕິບັດຕາມຂໍ້ກຳນົດຂອງໜ່ວຍງານ ( SHEQ) ທຸກຂໍ້ກຳນົດ

4.5.6. ຜູ້ຮັບຈ້າງຈະຕ້ອງຈັດຫາບຸກຄະລາກອນຫຼືທີມງານຕາມຜັງການບໍລິຫານງານເຊິ່ງປະກອບມີດັ່ງນີ້

4.5.6.1. ຕາມຂໍ້ກຳນົດໃນ ເອກະສານຊ້ອນທ້າຍ A (Appendix A)

## 5. ເກນການພິຈາລະນາຄັດເລືອກ

5.1. ຄະນະກຳມະການຈັດຊື້ ຈັດຈ້າງ ຈະເປີດຊອງຂໍ້ສະເໜີ ແລະ ພິຈາລະນາຂໍ້ສະເໜີທາງດ້ານເຕັກນິກ ແລະ ລາຄາ ດັ່ງນີ້:

5.1.1. ພິຈາລະນາຂໍ້ສະເໜີທາງດ້ານເຕັກນິກ ນ້ຳໜັກ ຄະແນນ 20%

5.1.2. ພິຈາລະນາຈາກລາຄາທີ່ສະເໜີ ນ້ຳໜັກ ຄະແນນ 80%

5.2. ຖ້າຜູ້ສະເໜີລາຄາຄົນໃດມີຄຸນສົມບັດບໍ່ຖືກຕ້ອງ ຕາມຂໍ້ 3 ຫຼື ຍື່ນເອກະສານການສະເໜີລາຄາບໍ່ຖືກຕ້ອງ ຫຼື ບໍ່ຄົບ ຕາມຂໍ້ 6 ຄະນະກຳມະການຈັດຊື້ ຈັດຈ້າງ ຂໍສະຫງວນສິດບໍ່ພິຈາລະນາຂໍ້ສະເໜີຂອງຜູ້ສະເໜີລາຄາຄົນນັ້ນ ຍົກເວັ້ນຂໍ້ຜິດພາດໜ້ອຍໜຶ່ງ ຫຼື ບໍ່ແມ່ນສາລະ ສຳຄັນ

5.3. ຄະນະກຳມະການ ຈັດຊື້ ຈັດຈ້າງຂໍສະຫງວນສິດບໍ່ຮັບພິຈາລະນາຂໍ້ສະເໜີຂອງຜູ້ສະເໜີລາຄາ ທີ່ສະເໜີລາຍລະອຽດແຕກຕ່າງຈາກເງື່ອນໄຂ ທີ່ ບໍລິສັດ ໄຟຟ້າຫົງສາ ຈຳກັດ ກຳໜົດໃນສ່ວນທີ່ສຳຄັນ ຫຼື ມີຜົນໃຫ້ເກີດການໄດ້ປຽບເສຍປຽບລະຫວ່າງຜູ້ສະເໜີລາຄາຄົນອື່ນ

5.4. ໃນການຕັດສິນການປະມູນ ຫຼື ໃນການເຮັດສັນຍາ ຄະນະກຳມະການຈັດຊື້ ຈັດຈ້າງ ມີສິດໃຫ້ຜູ້ສະເໜີລາຄາ ອະທິບາຍ ຫຼື ຊີ້ແຈງຕາມຄວາມຈິງ ເຖິງ ສະພາບ ສະຖານະ ຫຼື ຄວາມຈິງອື່ນ ໆ ທີ່ກ່ຽວຂ້ອງກັບຜູ້ສະເໜີລາຄາໄດ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະບໍ່ຮັບລາຄາ ຫຼື ບໍ່ເຮັດສັນຍາ ຫາກຫລັກຖານດັ່ງກ່າວບໍ່ເໝາະສົມ ຫຼື ບໍ່ພຽງພໍ ຫຼື ບໍ່ຖືກຕ້ອງ

5.5. ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຂໍສະຫງວນສິດໃນການ ຍົກເລີກການປະມູນ ຫຼື ບໍ່ຮັບພິຈາລະນາຈັດຈ້າງ ອີງຕາມການພິຈາລະນາຂອງຄະນະກຳມະການຈັດຊື້ ຈັດຈ້າງ ໂດຍພິຈາລະນາຈາກຜົນປະໂຍດ ຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເປັນຫລັກ ແລະ ຖືວ່າການຕັດສິນໃຈຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເປັນເດັດຂາດ ຜູ້ສະເໜີລາຄາບໍ່ມີສິດຮຽກຮ້ອງ ຄ່າເສຍຫາຍກັບ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ

5.6. ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຂໍສະຫງວນສິດໃນການແກ້ໄຂ ຫຼື ປັບປ່ຽນເງື່ອນໄຂໃນ TOR ຕາມຄວາມເໝາະສົມ ທັງນີ້ ເພື່ອຜົນປະໂຫຍດຂອງບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເປັນສຳຄັນ ແລະຖືວ່າການຕັດສິນໃຈຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເປັນເດັດຂາດ ຜູ້ສະເໜີລາຄາບໍ່ມີສິດຮຽກຮ້ອງ ຄ່າເສຍຫາຍກັບ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ

## 6. ການສະເໜີລາຄາ

6.1. ຜູ້ສະເໜີລາຄາ ຕ້ອງຍື່ນຊອງປະມູນຈຳນວນ 2 ຊອງຄື: ຊອງທາງດ້ານເຕັກນິກ 1 ຊອງ ແລະ ຊອງລາຄາທີ່ສະເໜີ 1 ຊອງ

6.1.1. ຊອງເຕັກນິກປະກອບດ້ວຍ

6.1.1.1. ລາຍລະອຽດ ແລະ ປະຫວັດການເຮັດວຽກຂອງຜູ້ສະເໜີລາຄາ (Company Profile) ແລະ ໃຫ້ຄັດຕິດເອກະສານອ້າງອີງທີ່ຄືກັບ ຫຼື ຄ້າຍຄືກັບງານປະມູນນີ້ 1 ປີ ຍ້ອນຫຼັງ (ຕ້ອງມີ)

6.1.1.2. ໃບທະບຽນວິສາຫະກິດ ຕາມກົດໝາຍ ສປປ ລາວ (ຕ້ອງມີ)

6.1.1.3. ໃບຢັ້ງຢືນການຈົດທະບຽນອາກອນ ຫຼື ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ ຫຼື ໃບຢັ້ງຢືນການມອບພັນທະອາກອນ (ຕ້ອງມີ)

6.1.1.4. ໃບມອບສິດ (ຖ້າມີ)

6.1.1.5. ແຜນຜັງບຸກຄະລາກອນ ແລະ ຜັງການບໍລິຫານ ແລະ ຜັງການຕິດຕໍ່ປະສານງານທັງໝົດ ພ້ອມ CV ສຳລັບງານປະມູນຄັ້ງນີ້ (ຕ້ອງມີ)

6.1.1.6. ແຜນການດຳເນີນວຽກງານບໍລິການ (ຕ້ອງມີ)

6.1.1.7. ແຜນການກວດສຸຂະພາບປະຈຳປີພ້ອມລາຍລະອຽດ (ຕ້ອງມີ)

6.1.1.8. ແຜນການຕອບໂຕ້ເຫດສຸກເສີນ ຂອງຜູ້ສະເໜີລາຄາ (ຖ້າມີ)

6.1.1.9. ເອກະສານ Certification ISO 9001, ISO 14001 , OHSAS 18001, ISO 45001 ຂອງຜູ້ສະເໜີລາຄາ (ຖ້າມີ)

6.1.1.10. ວິທີການປະຕິບັດຕໍ່ສິ່ງແວດລ້ອມ ຂອງຜູ້ສະເໜີລາຄາ (ຖ້າມີ)

6.1.1.11. ຫຼັກຖານດ້ານການເງິນ (Bank statement) ຍ້ອນຫຼັງຈາກວັນທີສະເໜີລາຄາ 1 ປີ ແລະຕ້ອງມີເງິນໝູນວຽນໃນບັນຊີບໍ່ນ້ອຍກວ່າ 100,000 ບາດ ຫຼື 50,000,000 ກີບ ຫຼືໜັງສືສະໜັບສະໜູນທາງດ້ານການເງິນຈາກທະນາຄານທຸລະກິດ

6.1.2. ຊອງລາຄາ ປະກອບດ້ວຍ

6.1.2.1. ໃບສະເໜີລາຄາຄ່າບໍລິການ ຈັດ ຕົບແຕ່ງ ແລະ ບຳລຸງວຽກງານຈັດສວນ ລາຄາທີ່ສະເໜີ ຕ້ອງລວມຄ່າທຳງານພະນັກງານ ແລະ ຄ່າອາກອນ ທີ່ເກີດຂຶ້ນແຫ່ງ ສປປ ລາວ

6.1.2.2. ລາຄາທີ່ສະເໜີແມ່ນບໍ່ລວມຄ່າບໍລິການນອກເວລາ

6.1.3. ກໍານົດຍື່ນຊອງປະມູນພາຍໃນວັນທີ່ **15 ກໍລະກົດ 2025**

6.1.4. ຜູ້ສະເໜີລາຄາຈະຕ້ອງຍື່ນປະມູນ ໂດຍປິດຊອງ ແລະ ຈ່າໜ້າຊອງ ແລະ ສົ່ງ ເອກະສານມາທີ່ສະຖານທີ່ດັ່ງນີ້

**Ms. Phannipa Kiatbumrung (Division Manager - Procurement)**

Address1 Hongsa Power Company Limited

NNN Building 4th Floor/Room No. D5, Boulichan Road,

Phonsinouan Village, Sisattanark District, Vientiane Capital, Lao PDR

Address 2 Hongsa Power Company Limited

Phonchan Office, Hongsa Sub-district, Xayabouly District, Lao PDR.

Telephone Number: +856-20-52441809
Tel: +66 54775869 EXT. 1131
E-mail address: Phannipa_K@hongsapower.com

## 7. ໄລຍະເວລາການຈ້າງ

ໄລຍະເວລາການຈ້າງແມ່ນ 3 ປີ ຕັ້ງແຕ່ **ວັນທີ** 1 **ມັງກອນ** 2026 **ເຖິງ ວັນທີ** 31 **ທັນວາ** 2028

## 8. ການຈ່າຍຄ່າຈ້າງ

8.1. ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຈະຈ່າຍຄ່າບໍລິການ ໃຫ້ຜູ້ຮັບຈ້າງ ເປັນງວດລາຍເດືອນຕາມຈໍານວນວັນທີ່ເຮັດວຽກຈິງ ແລະ ຫຼັງຈາກຫັກຄ່າຈ້າງແລະ / ຫຼື ຄ່າປັບໄໝ (ຖ້າມີ) ຕາມເງື່ອນໄຂໃນສັນຍາຈ້າງ ຫຼັງຈາກການໃຫ້ບໍລິການ ໃນເດືອນນັ້ນສໍາເລັດ ແລະຜູ້ຮັບຈ້າງໄດ້ສົ່ງເອກະສານໃບແຈ້ງໜີ້ ແລະ ໃບລົງເວລາເຮັດວຽກຂອງພະນັກງານ ແລະໃບສົ່ງມອບວຽກງານຂອງແຕ່ລະເດືອນໃຫ້ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ບໍ່ເກີນກວ່າ ວັນທີ່ 15 ຂອງເດືອນຖັດໄປ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຈະຈ່າຍຄ່າຈ້າງໃນວັນທີ່ 10 ຂອງເດືອນຖັດໄປ ຫາກວັນດັ່ງກ່າວ ກົງກັບວັນຢຸດ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຈະຈ່າຍຄ່າຈ້າງໃນວັນເຮັດການຖັດໄປ ຫາກຜູ້ຮັບຈ້າງສົ່ງມອບໃບແຈ້ງໜີ້ຫຼັງ ວັນທີ່ 15 ແຕ່ບໍ່ເກີນກວ່າ ວັນທີ່ 31 ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຈະຈ່າຍຄ່າຈ້າງ ໃນວັນທີ່ 25 ຂອງອີກເດືອນຖັດໄປ ໂດຍເອກສານການວາງບິນຈະຕ້ອງຄົບຖ້ວນສົມບູນຕາມຂໍ້ກໍາໜົດຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ

8.2. ຄ່າບໍລິການ ນອກເວລາ ໃນກໍລະນີທີ່ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ມີຄວາມຈໍາເປັນຕ້ອງໃຊ້ບໍລິການ ນອກເວລາເຮັດວຽກ ຜູ້ຮັບຈ້າງມີສິດຮຽກເກັບເງິນ ຄ່າບໍລິການ ນອກເວລາເຮັດວຽກກັບບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ໄດ້ ຕາມອັດຕາທີ່ຕົກລົງກັນໄວ້ ຄ່າແຮງງານ

## 9. ຫຼັກປະກັນ

9.1. ຫຼັກປະກັນສັນຍາ ມູນຄ່າ 10% ຂອງມູນຄ່າສັນຍາ ໂດຍ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ຈະຫັກເງິນຈໍານວນ 10% ໃນຮອບການຈ່າຍ ແຕ່ລະຮອບເປັນຫຼັກປະກັນສັນຍາ

9.2. ການຄືນຫຼັກປະກັນ

9.2.1. ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຈະຄືນ ຫຼັກປະກັນສັນຍາໃຫ້ຜູ້ຮັບຈ້າງ ພາຍໃນ 30 ວັນ ຫຼັງຈາກສິ້ນສຸດສັນຍາ ໂດຍຜູ້ຮັບຈ້າງບໍ່ມີສິດຮຽກຮ້ອງຄ່າໃຊ້ຈ່າຍເພີ່ມເຕີມຈາກ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ

9.2.2. ຫຼັງຈາກຜູ້ຮັບຈ້າງໄດ້ສິ້ນສຸດພາລະ ຜູກພັນຕາມສັນຍາຈ້າງ ແລະ ທາງອາກອນຕາມກົດໝາຍ ຂອງ ສປປ ລາວ

## 10.ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ຮັບຈ້າງ

10.1.1. ທົ່ວໄປ

10.1.2. ໃຫ້ບໍລິການ ຈັດ ຕົບແຕ່ງ ບຳລຸງ ຮັກສາ ວຽກງານ ຈັດສວນ ແລະ ວຽກງານກະກຽມເບ້ຍໄມ້ ເພື່ອໃຊ້ໃນງານ ຟື້ນຟູເໝືອງ ແລະ ຟື້ນຟູປ່າ ລາຍລະອຽດຕາມຂໍ້ 4

10.1.3. ຜູ້ຮັບຈ້າງຕ້ອງຈັດຫາແຮງງານ ແລະ ບຸກຄະລາກອນທີ່ມີຄວາມຮູ້ ຄວາມສາມາດໃຫ້ຄົບຖ້ວນພຽງພໍຕໍ່ການເຮັດວຽກຕາມແຜນງານທີ່ສະເໜີ ແລະ ຕໍ່ເນື່ອງຢ່າງສະໝ່ຳສະເໝີ

10.1.4. ຜູ້ຮັບຈ້າງຕ້ອງຈັດຫາ ວັດສະດຸ ອຸປະກອນ ເຄື່ອງມື ທີ່ນອກເໜືອ ຈາກທີ່ຜູ້ວ່າຈ້າງຈັດຫາໃຫ້ ເພື່ອໃຫ້ເຮັດວຽກໄດ້ຢ່າງມີປະສິດທິພາບ

10.1.5. ຜູ້ຮັບຈ້າງຕ້ອງຈັດຫາ ອຸປະກອນປ້ອງກັນອັນຕະລາຍສ່ວນບຸກຄົນ (PPE) ໃຫ້ພຽງພໍ ແລະ ຜູ້ຮັບຈ້າງຕ້ອງຮັບຜິດຊອບຕໍ່ຄວາມປອດໄພໃນຊີວິດ ແລະ ຊັບສິນຂອງຜູ້ຮັບຈ້າງ ແລະ ພະນັກງານຂອງຜູ້ຮັບຈ້າງເອງ

10.1.6. ຜູ້ຮັບຈ້າງຕ້ອງຈັດຫາ ລົດ ສຳຫຼັບ ຮັບ ສົ່ງ ພະນັກງານ ແລະ ຂົນສົ່ງ ວັດສະດຸ ອຸປະກອນ ເຄື່ອງມື ແລະ ຕົ້ນໄມ້ເອງ

10.1.7. ຜູ້ຮັບຈ້າງຕ້ອງເບິ່ງແຍງ ຮັກສາ ວັດສະດຸ ອຸປະກອນ ແລະ ເຄື່ອງມື ທີ່ຜູ້ວ່າຈ້າງຈັດຫາໃຫ້ ເປັນຢ່າງດີ ໃຫ້ຢູ່ໃນສະພາບທີ່ດີ ພ້ອມໃຊ້ງານຕະຫຼອດເວລາ ຫາກເກີດຄວາມເສຍຫາຍໂດຍຄວາມປະໝາດ ຫຼື ໃຊ້ງານຜິດປະເພດ ຫຼື ເກີດການສູນຫາຍ ຜູ້ຮັບຈ້າງຕ້ອງຮັບຜິດຊອບຄ່າເສຍຫາຍທີ່ເກີດຂຶ້ນ ຕາມມູນຄ່າຄວາມເສຍຫາຍທີ່ເກີດຂຶ້ນຈິງ

10.1.8. ຜູ້ຮັບຈ້າງຕ້ອງສະເໜີແຜນການເຮັດວຽກໃຫ້ແກ່ຜູ້ວ່າຈ້າງ ແລະ ປະຕິບັດຕາມແຜນງານນັ້ນ ເພື່ອການເຮັດວຽກຢ່າງມີປະສິດທິພາບ

10.1.9. ໃນກໍລະນີທີ່ຜູ້ວ່າຈ້າງມີຄວາມຈຳເປັນຮີບດ່ວນ ຫຼື ສຸກເສີນ ຜູ້ຮັບຈ້າງຕ້ອງໃຫ້ຄວາມຮ່ວມມື ໃນການເລັ່ງງານ ຫຼື ຈັດຫາແຮງງານມາສະໜັບສະໜູນວຽກງານຂອງຜູ້ວ່າຈ້າງຢ່າງເຕັມກຳລັງ

10.1.10. ໃນກໍລະນີທີ່ເກີດຄວາມຜິດພາດໃນການເຮັດວຽກງານ ຜູ້ວ່າຈ້າງ ຫຼື ຕົວແທນຂອງຜູ້ວ່າຈ້າງພິຈາລະນາແລ້ວ ຜົນການເຮັດງານຍັງບໍ່ເປັນທີ່ເພິ່ງພໍໃຈ ຜູ້ວ່າຈ້າງ ຫຼື ຕົວແທນ ຂອງຜູ້ວ່າຈ້າງ ມີສິດຮຽກໃຫ້ຜູ້ຮັບຈ້າງມາແກ້ໄຂງານດັ່ງກ່າວໄດ້ທັນທີ

10.2. ລະບຽບປະຕິບັດ / ສິດແລະສະຫວັດດີການ

10.2.1. ຜູ້ຮັບຈ້າງຕ້ອງຈັດຫາ ເຄື່ອງແບບໃຫ້ກັບພະນັກງານທຸກຄົນ ເພື່ອຄວາມເປັນລະບຽບ ແລະ ລະຫວ່າງເຮັດວຽກງານພະນັກງານຂອງຜູ້ຮັບຈ້າງຕ້ອງໃສ່ເຄື່ອງແບບທີ່ຜູ້ຮັບຈ້າງຈັດຫາໃຫ້

10.2.2. ຜູ້ຮັບຈ້າງຕ້ອງຈັດໃຫ້ມີການກວດສຸຂະພາບປະຈຳປີໃຫ້ກັບພະນັກງານ ຕາມກົດໝາຍແຫ່ງ ສປປ ລາວ ແລະ ຕ້ອງສົ່ງຜົນກວດສຸຂະພາບຂອງພະນັກງານ ໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ພາຍໃນ 30 ວັນຫຼັງຈາກກວດສຸຂະພາບແລ້ວ

10.2.3. ຜູ້ຮັບຈ້າງແລະພະນັກງານຂອງຜູ້ຮັບຈ້າງ ຕ້ອງປະຕິບັດຕາມກົດ ລະບຽບ ຄວາມປອດໄພຂອງບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຢ່າງເຄັ່ງຄັດ

10.2.4. ໃນກໍລະນີທີ່ເກີດອຸບັດຕິເຫດ ລະຫວ່າງປະຕິບັດໜ້າທີ່ ພະນັກງານຂອງຜູ້ຮັບຈ້າງ ຕ້ອງເຮັດບົດລາຍງານການເກີດອຸບັດຕິເຫດ ໂດຍເປັນໄປຕາມແບບຟອມການລາຍງານຂອງບໍລິສັດ ໄຟຟ້າ ຫົງສາ ຈຳກັດ

10.2.5. ຜູ້ຮັບຈ້າງຕ້ອງຈັດສົ່ງເອກະສານ ຄຸນສົມບັດຂອງພະນັກງານທັງໝົດ ໃຫ້ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກ່ອນວັນເລີ່ມສັນຍາຈ້າງ 1 ອາທິດ

10.2.5.1. ປະຫວັດພະນັກງານ ພ້ອມຂໍ້ມູນ ທີ່ຢູ່ປັດຈຸບັນ ເບີໂທ ທີ່ຕິດຕໍ່ໄດ້ (CV)

10.2.5.2. ສຳເນົາບັດປະຈຳຕົວ

10.2.5.3. ສຳເນົາທະບຽນບ້ານ ຫຼື ສຳມະໂນຄົວ

10.2.5.4. ຜົນການກວດສຸຂະພາບຂັ້ນຕົ້ນ ລວມເຖິງ ການກວດສານເສບຕິດ ຈາກໂຮງໝໍ ບໍ່ເກີນ 6 ເດືອນ ນັບຈາກວັນທີ່ເລີ່ມສັນຍາ

10.2.6. ວັນແລະເວລາໃນການເຮັດວຽກ

ວັນ ຈັນ ເຖິງ ວັນເສົາ ເວລາ 8.00 ໂມງເຊົ້າ ເຖິງ5.00 ໂມງແລງ

10.2.7. ຜູ້ຮັບຈ້າງ ແລະ ພະນັກງານຂອງຜູ້ຮັບຈ້າງຕ້ອງປະຕິບັດຕາມກົດ ລະບຽບ ດ້ານ ຄວາມປອດໄພ ອາຊີວະອະນາໄມ ແລະ ສິ່ງແວດລ້ອມ ຂອງບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຢ່າງເຄັ່ງຄັດໃນລະຫວ່າງປະຕິບັດໜ້າທີ່

10.2.8. ຜູ້ຮັບຈ້າງ ແລະ ພະນັກງານຂອງຜູ້ຮັບຈ້າງ ຕ້ອງຕັ້ງໃຈເຮັດວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງເຄັ່ງຄັດ ແລະ ບໍ່ຝ່າຝືນກົດລະບຽບ ຂອງບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ບໍ່ສະແດງອອກເຊິ່ງ ອາການ ຫຼື ເວົ້າບໍ່ດີ ບໍ່ສຸພາບ ກັບເພື່ອນຮ່ວມງານ ຫຼື ກັບພະນັກງານຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ

10.2.9. ຜູ້ຮັບຈ້າງ ແລະ ພະນັກງານຂອງຜູ້ຮັບຈ້າງຕ້ອງບໍ່ປະພຶດຕົນທີ່ບໍ່ດີອາດກໍ່ໃຫ້ເກີດຄວາມເສຍຫາຍຕໍ່ ຊື່ສຽງຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຫາກພະນັກງານຂອງຜູ້ຮັບຈ້າງບໍ່ປະຕິບັດຕາມຂໍ້ນີ້ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຂໍສະຫງວນສິດລະງັບ ຫຼື ສັ່ງໃຫ້ຢຸດປະຕິບັດໜ້າທີ່ໃນທັນທີ ແລະ ລາຍງານໃຫ້ຄະນະກໍາມະການກວດສອບແລະພິຈາລະນາລົງໂທດ ຫຼື ຍົກເລີກການໃຊ້ບໍລິການພະນັກງານຄົນດັ່ງກ່າວ ແລະ ທາງຜູ້ຮັບຈ້າງ ຕ້ອງຈັດສົ່ງພະນັກງານຄົນໃໝ່ມາປະຕິບັດໜ້າທີ່ແທນພະນັກງານຄົນດັ່ງກ່າວ ທີ່ມີຄຸນສົມບັດຕາມຂໍ້ 4.2

10.3. ການຄຸ້ມຄອງ ແລະ ການປະກັນໄພ

ຜູ້ຮັບຈ້າງຕ້ອງເຮັດປະກັນຊີວິດໃຫ້ກັບພະນັກງານ ໃນວົງເງິນທີ່ເໝາະສົມ ຕາມກົດໝາຍແຮງງານ ຂອງ ສປປ ລາວ ໂດຍເລີ່ມຄຸ້ມຄອງຕັ້ງແຕ່ ວັນທີ່ເລີ່ມວຽກງານ ແລະ ຫາກພະນັກງານຂອງຜູ້ຮັບຈ້າງໄດ້ຮັບບາດເຈັບ ພິການ ຫຼື ເສຍຊີວິດ ຈາກການເຮັດວຽກ ຫຼື ຕ້ອງໂທດ ຄະດີຄວາມ ອັນເກີດຈາກການປະຕິບັດໜ້າທີ່ຕາມສັນຍານີ້ ຜູ້ຮັບຈ້າງຕ້ອງຮັບຜິດຊອບ ຊົດໃຊ້ຄ່າເສຍຫາຍ ຫຼື ຄ່າສິນໄໝທົດແທນ ແລະ ຄ່າໃຊ້ຈ່າຍອື່ນໆ (ຖ້າມີ) ໃຫ້ແກ່ພະນັກງານຂອງຜູ້ວ່າຈ້າງທັງໝົດ ໂດຍບໍ່ເປັນຄວາມຮັບຜິດຊອບຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ

| ແຜນປະກັນກອງທຶນເງິນທົດແທນ | ວົງເງິນ |
|---|---|
| ກໍລະນີເສຍຊີວິດ | 50,000,000 ກີບ |
| ກໍລະນີເສຍເສຍອົງຄະຫຼືພິການຖາວອນ | 50,000,000 ກີບ |
| ຄ່າປິ່ນປົວສຸຂະພາບ | 5,000,000 ກີບ |

10.4. ພາສີ ແລະ ອື່ນໆ

10.4.1. ຜູ້ຮັບຈ້າງມີໜ້າທີ່ຮັບຜິດຊອບຄ່າພາສີ ອາກອນ ແລະ ສະຫວັດດີການຕ່າງໆ ຕາມກົດໝາຍ ແຫ່ງ ສປປ ລາວ

10.4.2. ຜູ້ຮັບຈ້າງຕ້ອງປະຕິບັດຕາມກົດໝາຍແຮງງານ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງຢ່າງເຄັ່ງຄັດ

## 11.ບົດປັບໄໝ

11.1. ໃນກໍລະນີທີ່ຜູ້ຮັບຈ້າງບໍ່ປະຕິບັດຕາມ ຂໍ້ 10 ບໍລິສັດ ໄຟຟ້າຫົງສາ ຈໍາກັດ ຄິດຄ່າປັບໄໝ 0.1% ຕໍ່ວັນ ທັງນີ້ຄ່າປັບໄໝທັງໝົດຕ້ອງບໍ່ເກີນ 10% ຂອງມູນຄ່າສັນຍາ

11.2. ໃນກໍລະນີຜູ້ຮັບຈ້າງບໍ່ປະຕິບັດຕາມ ກົດລະບຽບ ຂໍ້ບັງຄັບຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ທາງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຈະແຈ້ງເຕືອນໂດຍວາຈາ ຫຼື ທາງ E-mail ໃນຄັ້ງທໍາອິດ ຫາກເກີດຊໍ້າອີກເປັນຄັ້ງທີ່ສອງ ບໍລິສັດ ໄຟຟ້າຫົງສາ ຈໍາກັດ ຈະອອກໜັງສືຕັກເຕືອນເປັນລາຍລັກອັກສອນ ຜູ້ຮັບຈ້າງຕ້ອງຕອບຮັບ ແລະ ແຈ້ງແຜນໃນການປັບປຸງແກ້ໄຂໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຮູ້ພາຍໃນ 7 ວັນຫຼັງຈາກໄດ້ຮັບໜັງສືຕັກເຕືອນ ຫາກຜູ້ຮັບຈ້າງເມີນເສີຍບໍ່ດໍາເນີນການໃດ ໆ ໃນກໍານົດໄລຍະເວລາດັ່ງກ່າວ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຄິດຄ່າປັບໃໝ 0.1 % ຕໍ່ວັນ ຂອງມູນຄ່າສັນຍາ ທັງນີ້ຄ່າປັບໄໝທັງໝົດຕ້ອງບໍ່ເກີນ 10% ຂອງມູນຄ່າສັນຍາ

## 12.ການຍົກເລີກສັນຍາ

12.1. ຄູ່ສັນຍາທັງ 2 ຝ່າຍມີສິດຍົກເລີກສັນຍາຈ້າງດັ່ງກ່າວໄດ້ໃນກໍລະນີທີ່ທັງ 2 ຝ່າຍຍິນຍອມ ແລະ ເຫັນກົງກັນໃນການຍົກເລີກສັນຍາຈ້າງດັ່ງກ່າວ

12.2. ຫາກຄູ່ສັນຍາຝ່າຍໃດຝ່າຍໜຶ່ງຜິດສັນຍາຄູ່ສັນຍາອີກຝ່າຍມີສິດບອກຍົກເລີກສັນຍາ ໂດຍຜູ້ທີ່ຜິດສັນຍາບໍ່ມີສິດຮຽກຮ້ອງຄ່າເສຍຫາຍໃດ ໆ ທີ່ເກີດຂຶ້ນໄດ້ ແລະ ໃນການຍົກເລີກສັນຍາຕ້ອງແຈ້ງຄູ່ສັນຍາອີກຝ່າຍໃຫ້ຮັບຮູ້ລ່ວງໜ້າບໍ່ນ້ອຍກວ່າ 60 ວັນ

12.3. ໃນກໍລະນີຄູ່ສັນຍາຝ່າຍໃດຝ່າຍໜຶ່ງຜິດສັນຍາ ແລະ ເຮັດໃຫ້ເກີດຄວາມເສຍຫາຍຕໍ່ຄູ່ສັນຍາ ຄູ່ສັນຍາອີກຝ່າຍມີສິດຮຽກຮ້ອງຄ່າເສຍຫາຍທີ່ເກີດຂຶ້ນ ກັບຄູ່ສັນຍາທີ່ຜິດສັນຍາ ຕາມຄ່າໃຊ້ຈ່າຍທີ່ເກີດຂຶ້ນຈິງ

12.4. ການຍົກເລີກສັນຍາຕ້ອງແຈ້ງເປັນລາຍລັກອັກສອນ ລ່ວງໜ້າບໍ່ນ້ອຍກວ່າ 60 ວັນ

## 13.ອື່ນໆ

ຜູ້ສົນໃຈເຂົ້າຮ່ວມງານປະມູນສາມາດເບິ່ງລາຍລະອຽດເພີ່ມເຕີມໄດ້ທີ່ www.hongsapower.com ຫຼື ຕິດຕໍ່ສອບຖາມ

ບໍລິສັດ ໄຟຟ້າຫົງສາ ຈຳກັດ

Ms. Phannipa Kiatbumrung (Division Manager - Procurement)

ຫ້ອງການບ້ານໂພນຈັນ ເມືອງຫົງສາ ແຂວງໄຊຍະບູລີ ສປປ ລາວ

ໂທລະສັບ +(856) 074 266121-29 ແຟັກ: +(856) 74 266120

ມືຖື 02052441809 e-mail: Phannipa_K@hongsapower.com

**CONTENTS**

**ລາຍການເອກະສານຊ້ອນທ້າຍ**

**Appendix A** – **ແຜນຜັງບໍລິຫານ ວັດສະດຸແລະອຸປະກອນ**

**Appendix B** – **ພື້ນທີ່ບໍລິການ Area of Service**

**Appendix C** – **ວັດສະດຸແລະອຸປະກອນທີ່ຈັດຫາໂດຍ ບໍລິສັດ ໄຟຟ້າຫົງສາ ຈຳກັດ**

# ເອກະສານຊ້ອນທ້າຍ A (Appendix A)

**ຜັງບໍລິຫານ ວັດສະດຸແລະອຸປະກອນ Site Organization Chart, Key Personnel and Equipment**

| ລໍາດັບ | ລາຍການ | ຫົວໜ່ວຍ | ຈໍານວນ |
|---|---|---|---|
| 1 | Supervisor ຫົວໜ້າງານ | ຄົນ | 1 |
| 2 | Skill Labor ກໍາມະກອນ | ຄົນ | 10 |

| ລໍາດັບ | ລາຍການ ເຄື່ອງມືແລະອຸປະກອນ | ຈໍານວນ | ຮູບພາບ |
|---|---|---|---|
| 1 | ເຄື່ອງຕັດຫຍ້າແບບສະພາຍ | 2 ເຄື່ອງ |  |
| 2 | ອຸປະກອນຕັດແຕ່ງຕົ້ນໄມ້ | 1 ຊຸດ |  |
| 3 | ກະບະບັນທຸກຂະໜາດນ້ອຍ | 1 ຄັນ | |

NNN Building 4th Floor/Room No. D5, Boulichan Road, Phonsinouan Village,
Sisattanark District, Vientiane Capital, Lao PDR.
Tel: + 856 21 223911, 222315, 222482, 219381
Fax: + 856 21 222089

Phonchanh Office, Hongsa District, Xayaboury Province, Lao PDR.
Tel: + 856 74 266121 – 29
Fax: + 856 74 266120

# ເອກະສານຊ້ອນທ້າຍ B (Appendix B)

**ພື້ນທີ່ການໃຫ້ບໍລິການ**

ຜູ້ຮັບຈ້າງຕ້ອງຈັດຫາ ພະນັກງານ ເຄື່ອງມືແລະອຸປະກອນ ໃຫ້ພຽງພໍຕໍ່ການເຮັດວຽກງານ ພື້ນທີ່ການໃຫ້ບໍລິການດັ່ງລຸ່ມ ພື້ນທີ່ພື້ນທີ່ສວນກ້າເບ້ຍໄມ້ ເພື່ອການຟື້ນຟູພື້ນທີ່ຂອງບໍລິສັດ ໄຟຟ້າຫົງສາ ຈຳກັດ ຈຳນວນ 68,448 ຕາລາງແມັດ

**ພື້ນທີ່ພື້ນທີ່ສວນກ້າເບ້ຍໄມ້ ເພື່ອການຟື້ນຟູພື້ນທີ່ຂອງບໍລິສັດ ໄຟຟ້າ ຫົງສາ ຈຳກັດ**



# ເອກະສານຊ້ອນທ້າຍ C (Appendix C)

ວັດສະດຸແລະອຸປະກອນທີ່ຈັດຫາໂດຍ ບໍລິສັດ ໄຟຟ້າຫົງສາ ຈໍາກັດ

ຜູ້ວ່າຈ້າງຈະຈັດຫາ ວັດສະດຸອຸປະກອນດັ່ງລຸ່ມເພື່ອສະໜອງວຽກງານບໍລິການ

1. ນໍ້າສໍາຫຼັບຫົດນໍ້າຕົ້ນໄມ້
2. ໄຟຟ້າ
3. ເມັດດອກໄມ້
4. ເມັດພືດ ແລະ ຕົ້ນໄມ້
5. ປຸຍ 15-15-15, 46-0-0
6. ສາຍຢາງຫົດນໍ້າ
7. ຫົວສະປີງເກີ
8. ສະແລນກັນແສງ 50%
9. ແກບເຜົາ
10. ຝຸ່ນໄຍໝາກພ້າວ
11. ຖົງເພາະຊໍາກ້າໄມ້
12. ນໍ້າຢາເລັ່ງຮາກ

NNN Building 4th Floor/Room No. D5, Boulichan Road, Phonsinouan Village, Sisattanark District, Vientiane Capital, Lao PDR.
Tel: + 856 21 223911, 222315, 222482, 219381
Fax: + 856 21 222089

Phonchanh Office, Hongsa District, Xayaboury Province, Lao PDR.
Tel: + 856 74 266121 – 29
Fax: + 856 74 266120